ສະບັບທີ 01, ຊຸດທີ 01 (2026); 37- 46

ວາລະສານວິທະຍາສາດການເມືອງ-ການປົກຄອງ

www.jnappa.lci.la; ISSN: 3107-1163; E-ISSN: 3107-1171

DOI: https://doi.org/10.71026/jnappa.2026.010104



ແນວຄວາມຄິດກ່ຽວກັບກົດໝາຍ ໃນນິພົນ ໂຮ່ຈິມິນ

Legal Concepts in Ho Chi Minh's Dissertation

ນ. ພຸດສະດາພອນ ພົມມະວົງສາ; ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ

E-mail: phoutsadaphone8355@gmail.com

ປະຫວັດຫົວຂໍ້ຄົ້ນຄວ້າ

ໄດ້ຮັບ: 30 ພຶດສະພາ 2025

ໄດ້ຮັບພາຍຫຼັງປັບປຸງ: 7 ມີນາ 2025

ຖືກຮັບຮອງ: 26 ກໍລະກົດ 2025

ຈັດພິມອອນລາຍ: 03 ມີນາ 2026

ບົດຄັດຫຍໍ້:

ປະເທດຫວຽດນາມ ໃນເວລາທີ່ຍັງບໍ່ທັນມີລັດຖະທຳມະນູນ ຊຶ່ງປະທານ ໂຮ່ຈິມິນ ໄດ້ເວົ້າວ່າ: ປະເທດ ເຮົາຈຶ່ງບໍ່ມີລັດຖະທຳມະ ນູນ. ປະຊາຊົນເຮົາຈຶ່ງບໍ່ໄດ້ຊົມໃຊ້ສິດ ເສລີພາບປະຊາທິປະໄຕ. ພວກເຮົາຕ້ອງມີລັດຖະທຳມະນູນປະຊາທິປະໄຕ; ປະທານ ໂຮ່ຈິ ມິນ ເປັນຜູ້ໃຫ້ຄວາມສຳຄັນໃນການປົກຄອງລັດດ້ວຍກົດໝາຍ ໂດຍສະເພາະລັດຖະທຳ ມະນູນ; ສະນັ້ນ ໃນນິພົນໂຮ່ຈິມິນ ເນື້ອໃນຈຳນວນໜຶ່ງຈຶ່ງເວົ້າເຖິງກົດໝາຍ ເປັນຕົ້ນການ ຜັນຂະຫຍາຍບັນດາມາດຕາ ຂອງລັດຖະທຳມະນູນ ກາຍເປັນກົດໝາຍຕ່າງໆ ເພື່ອຄຸ້ມຄອງ ລັດຄຸ້ມຄອງສັງຄົມດ້ວຍກົດໝາຍ. ສະນັ້ນ, ຈຸດ ປະສົງໃນການສຶກສາແນວຄິດກ່ຽວກັບກົດ ໝາຍ ໃນນິພົນ ໂຮ່ຈິມິນ ເພື່ອຂຸດຄົ້ນບັນດາທັດສະນະ, ແນວຄິດ ຂອງປະທານ ໂຮ່ຈິມິນ ກ່ຽວກັບກົດໝາຍ ແນໃສ່ເພື່ອເປັນຫຼັກການ, ເປັນບ່ອນອີງທາງດ້ານແນວຄິດທິດສະດີທີ່ ໜັກແໜ້ນໃຫ້ແກ່ການຮຽນຮູ້ ແລະ ໝູນໃຊ້ເຂົ້າໃນພຶດຕິກຳ ຂອງລະບົບການປົກຄອງ ກໍຄື ການສ້າງ ແລະ ປັບປຸງກົດໝາຍ ໃຫ້ສາມາດຕອບສະໜອງຄວາມຕ້ອງການຂອງສັງຄົມ ເຮັດ ໃຫ້ກົດໝາຍເປັນເຄື່ອງມືສະກັດກັ້ນ ແລະ ຕ້ານການກະທຳຜິດໃນສັງຄົມ, ເພື່ອຄວບຄຸມ ການປະພຶດຂອງຄົນໃນສັງຄົມດ້ວຍກົດໝາຍ, ສ້າງຄວາມສະເໝີພາບ, ຄວາມເທົ່າທຽມ, ສ້າງຄວາມສັກສິດທາງດ້ານກົດໝາຍ ໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງລັດ, ລວມໝູ່, ບຸກຄົນ ແລະ ພົນລະເມືອງ ຢ່າງແທ້ຈິງ.

ຄຳສັບສຳຄັນ: ກົດໝາຍ, ແນວຄິດ ໂຮ່ຈິມິນ, ສະຕິກົດໝາຍ.

Abstract

In the period of Vietnam which did not have a constitution when Ho Chi Minh said that our country does not have a constitution. Our people do not enjoy freedom and democracy. We must have a democratic constitution. Ex-president Ho Chi Minh prioritized the importance for governing the state by law, especially the constitution; therefore, in the Ho Chi Minh's dissertations, there are a number of contents that refers law, legal concepts such as the development of articles of the constitution into laws for governing the state and society. Therefore, the purpose of this study is to summarize legal concepts in the Ho Chi Minh Collection or dissertation; it also aims at exploring the Ho Chi Minh's views and thought on legal bases, principles, a solid theoretical basis for learning and applying those concepts in actual actions among the administrative system including creating and improving laws to meet the needs of society, making laws as a tool to prevent and combat crimes in society, controlling the behavior of people in society by law, to create equality, equity, and create legal validity to truly protect the legitimate rights and interests of the state, groups, individuals, and citizens.

Keywords: laws, Ho Chi Minh's Thought, legal consciousness.

ກົດໝາຍ ແມ່ນສິ່ງສຳຄັນທີ່ຄຽງຄູ່ກັບສັງຄົມ, ບ່ອນໃດມີສັງຄົມ ແມ່ນບ່ອນນັ້ນມີກົດໝາຍ, ເພາະວ່າມະນຸດຕ້ອງຢູ່ຮ່ວມກັນເປັນສັງຄົມ, ກົດໝາຍ ເວລາໃດກໍບໍ່ສາມາດຕັດແຍກອອກຈາກການຮັບໃຊ້ສັງຄົມ ແລະ ທຸກໆສັງຄົມ ຈຳເປັນຕ້ອງມີກົດໝາຍໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ຊຶ່ງກົດໝາຍເປັນຂໍ້ກຳນົດເພື່ອປົກປ້ອງລະບອບການເມືອງ, ເສດຖະກິດ-ສັງຄົມ, ຄວາມສະຫງົບຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ, ກຳມະສິດ ຂອງລັດ, ລວມໝູ່ ແລະ ສ່ວນຕົວບຸກຄົນ, ສິດເສລີພາບ ແລະ ກຽດສັກສີຂອງພົນລະເມືອງ ຊຶ່ງອົງການອຳນາດລັດທີ່ກ່ຽວຂ້ອງທີ່ເປັນຕົວແທນຂອງປະຊາຊົນ, ເປັນຜູ້ບັງຄັບປະຕິບັດຕໍ່ຜູ້ລະເມີດ ໂດຍການນຳໃຊ້ມາດຕະການຕ່າງໆທີ່ກົດໝາຍກຳນົດໄວ້ ທຸກຄົນຕ້ອງໄດ້ເຄົາລົບ ແລະປະຕິບັດໃຫ້ເຂັ້ມງວດ, ແນໃສ່ເຮັດໃຫ້ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ແລະ ສ້າງຄວາມເຊື່ອໝັ້ນໃຫ້ແກ່ປະຊາ ຊົນ; ຈຸດປະສົງເພື່ອຮັບປະກັນໃຫ້ປະຊາຊົນ ໄດ້ຮັບການປົກປ້ອງສິດ, ຜົນປະໂຫຍດອັນຊອບທຳ ແລະ ມີຄວາມສະເໝີພາບຕໍ່ໜ້າກົດໝາຍ ເຮັດໃຫ້ສັງຄົມມີຄວາມເທົ່າທຽມກັນ, ມີສິດປະຊາທິປະໄຕມີຄວາມຍຸຕິທຳໃຫ້ແກ່ທຸກຊັ້ນຄົນ ແນໃສ່ປົກປ້ອງກົດໝາຍໃຫ້ມີຄວາມສັກ ສິດ, ເຂັ້ມງວດ ແລະມີຄວາມຍຸຕິທຳ ດ້ວຍການນຳໃຊ້ກົດໝາຍເປັນເຄື່ອງມືດັດປັບສາຍພົວພັນສັງຄົມ ເພື່ອເປັນການປົກປັກຮັກສາ ແລະສ້າງສາພັດທະນາປະເທດໃຫ້ມີຄວາມສີວິໄລ ແລະຍຸຕິທຳໃນສັງຄົມ.

I. ເນື້ອໃນແນວຄິດກ່ຽວກັບກົດໝາຍໃນນິພົນ ໂຮ່ຈິມິນ.

ປະທານໂຮ່ຈິມິນໄດ້ໃຫ້ທັດສະນະວ່າ: "ກົດໝາຍມີຜົນສັກສິດນັບແຕ່ພາຍຫຼັງສະພາແຫ່ງຊາດຮັບຮອງເອົາ ແລະ ອຳນາດການປົກຄອງປະກາດໃຊ້" (ໂຮ່ຈິມິນ, 2019, ໜ້າ 335). ດັ່ງນັ້ນ, ກົດໝາຍແມ່ນນິ ຕິກຳທີ່ສ້າງຂຶ້ນໂດຍອົງການລັດທີ່ມີສິດອຳນາດ, ຮັບຮອງເອົາໂດຍສະພາແຫ່ງຊາດ ແລະ ປະກາດໃຊ້ໂດຍປະທານປະເທດ ຊຶ່ງກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ແນໃສ່ດັດປັບສາຍພົວພັນສັງຄົມໃນຫຼາຍຂົງເຂດ ຫຼື ຂົງເຂດໃດໜຶ່ງ ຊຶ່ງມີຜົນບັງຄັບໃນຂອບເຂດທົ່ວປະເທດ ແລະ ນຳໃຊ້ຍາວນານ. ກົດໝາຍແມ່ນລະບົບຂໍ້ກຳນົດທີ່ມີຜົນບັງຄັບທົ່ວໄປ, ມີຄວາມຊັດເຈນທາງດ້ານຮູບການ, ຮັບປະກັນໂດຍລັດ, ສ່ອງແສງເຖິງເຈດຈຳນົງ ຂອງຊົນຊັ້ນປົກຄອງທີ່ຍົກຂຶ້ນເປັນກົດໝາຍ ແລະ ເປັນສິ່ງດັດປັບສາຍພົວພັນສັງຄົມ ຫຼື ເວົ້າໄດ້ອີກຢ່າງໜຶ່ງວ່າ: ກົດໝາຍ ແມ່ນການຜັນຂະຫຍາຍແນວທາງຂອງພັກ ໃຫ້ເປັນນິຕິກຳໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ເພື່ອຮັບປະກັນໃຫ້ປະຊາ ຊົນ ໄດ້ຮັບການປົກປ້ອງ ແລະ ມີຄວາມສະເໝີພາບຕໍ່ກົດໝາຍ. ກົດໝາຍທີ່ລັດວາງອອກ ຈຸດປະສົງກໍເພື່ອຄວບຄຸມການປະພຶດຂອງຄົນໃນສັງຄົມ. ກົດໝາຍ ແມ່ນສິ່ງສຳຄັນທີ່ຄຽງຄູ່ກັບ

ສັງຄົມ ຄືບ່ອນໃດມີສັງຄົມແມ່ນບ່ອນນັ້ນຕ້ອງມີກົດໝາຍ, ເພາະວ່າມະນຸດຕ້ອງຢູ່ຮ່ວມກັນເປັນສັງຄົມ ໂດຍປະກອບມີກຸ່ມມະນຸດທີ່ມີການພົວພັນກັນ ແລະ ສະໜອງຄວາມຕ້ອງການຂອງມະນຸດ ໃນການປົກປັກຮັກສາ ເພື່ອເຮັດໃຫ້ສັງ ຄົມມີຄວາມສະຫງົບສຸກ ແລະ ຄວາມເປັນລະບຽບຮຽບຮ້ອຍ ນັ້ນຄືກົດ ເກນ ຫຼື ຂໍ້ບັງຄັບຕ່າງໆທີ່ດັດປັບສັງຄົມຈຶ່ງເອີ້ນວ່າກົດໝາຍ. ກົດໝາຍ ຍັງມີໜ້າທີ່ຮັກສາ ລະບອບການເມືອງ, ເສດຖະກິດ, ວັດທະ ນະທຳ-ສັງຄົມ, ປົກປ້ອງສິດຜົນປະໂຫຍດຂອງລັດ ແລະ ລວມໝູ່, ກົດໝາຍຄືການຮັບໃຊ້ສັງຄົມ, ຄວາມປອດໄພຂອງຊີວິດ, ຊັບສິນ, ກຽດສັກສີ, ເສລີພາບຂອງພົນລະເມືອງ, ຄວາມສະຫງົບຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຄວາມສະເໝີພາບ ແລະ ຄວາມຍຸຕິທຳພ້ອມທັງເປັນເຄື່ອງມືສະກັດກັ້ນ ແລະ ຕ້ານການກະທຳຜິດ.

1. ເນື້ອໃນແນວຄິດກ່ຽວກັບການສ້າງແລະປັບປຸງກົດໝາຍ.

ການສ້າງ ແລະ ປັບປຸງກົດໝາຍຕ່າງໆ ທີ່ຄວບຄຸມການປະພຶດຂອງທຸກຄົນໃນສັງຄົມ ແລະ ຖືເປັນການຮັກສາຄວາມເປັນລະບຽບຮຽບຮ້ອຍ ພ້ອມທັງຄວາມສະຫງົບສຸກ ແລະ ຍຸຕິທຳໃນສັງຄົມ. ເພື່ອເຮັດໃຫ້ສັງຄົມມີຄວາມເປັນລະບຽບຮຽບຮ້ອຍນັ້ນ ຕ້ອງໄດ້ສ້າງກົດໝາຍເປັນເຄື່ອງມືໃນການຄຸ້ມຄອງສັງຄົມ. ປະທານ ໂຮ່ຈີມິນ ໄດ້ໃຫ້ທັດສະນະວ່າ: "ສັງຄົມລ້ວນແຕ່ມີການປ່ຽນແປງຢູ່ສະເໝີ, ກ້າວຂຶ້ນເລື້ອຍໆ ແລະ ບໍ່ມີເວລາໃດຖອຍຫຼັງ ກົດໝາຍກໍ ກ້າວຂຶ້ນເລື້ອຍໆບໍ່ມີຖອຍຫຼັງ. ນັ້ນແມ່ນກົດເກນ" (ໂຮ່ຈີມິນ, 2019, ໜ້າ 434). "ແຕ່ຖ້າທຽບໃສ່ສະພາບການໃໝ່ ແລະ ໜ້າທີ່ການປະຕິວັດ ໃໝ່ໃນປັດຈຸບັນ ແມ່ນບໍ່ສອດຄ່ອງອີກ" (ໂຮ່ຈີມິນ, 2011, ໜ້າ 412). ຍ້ອນແນວນັ້ນ, ຈຶ່ງມີການສ້າງ ແລະ ປັບປຸງກົດໝາຍໃຫ້ແທດເໝາະກັບສະພາບຕົວຈິງ ເພື່ອດັດປັບສາຍພົວພັນໃນສັງຄົມແລະ ຄຸ້ມຄອງລັດຄຸ້ມຄອງສັງຄົມດ້ວຍກົດໝາຍໃນແຕ່ລະ ໄລຍະ ໃຫ້ມີຄວາມສອດຄ່ອງກັບຕົວຈິງໃນສັງຄົມປັດຈຸບັນ ໄດ້ມີການປ່ຽນ ແປງໃໝ່ດັ່ງນີ້:

1). ການສ້າງ ແລະ ປັບປຸງກົດໝາຍ ບົນພື້ນຖານຄວາມສອດຄ່ອງກັບລັດຖະທຳມະນູນ ແລະ ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ລັດ. "ລັດຖະທຳມະນູນຫວຽດນາມ ຕ້ອງລະບຸໃຫ້ຈະແຈ້ງ ກ່ຽວກັບຜົນງານອັນສະຫງ່າງາມຂອງການປະຕິວັດ ແລະຕ້ອງໄດ້ສ້າງຂຶ້ນບົນຫຼັກຖານຄວາມສາມັກຄີທົ່ວປວງຊົນ, ຮັບປະກັນບັນດາສິດເສລີພາບປະຊາທິປະໄຕ, ສ້າງຕັ້ງອຳນາດການປົກຄອງທີ່ເຂັ້ມແຂງ ຂອງປະຊາຊົນ" (ໂຮ່ຈີມິນ, 2019, ໜ້າ 407). ກົດໝາຍທີ່ສ້າງຂຶ້ນຕ້ອງສອດຄ່ອງ, ຄົບຖ້ວນສົມບູນທີ່ສຸດກ່ຽວກັບອຸດົມຄະ ຕິ ແລະ ແນວທາງຂອງພັກ, ທາດແທ້ອັນດີງາມຂອງລະບອບປະຊາ ທິປະໄຕປະຊາຊົນ ແລະ ຄວາມມຸ່ງມາດປາຖະໝາ ຂອງປະຊາຊົນບັນດາເຜົ່າ.

2). ການສ້າງ ແລະ ປັບປຸງກົດໝາຍ ບົນພື້ນຖານຄວາມສອດຄ່ອງກັບສະພາບຄວາມເປັນຈິງ ທາງດ້ານເສດຖະກິດ-ສັງຄົມ. ເພື່ອ "ແນໃສ່ສ້າງຜົນປະໂຫຍດແຜນການແຫ່ງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ, ສອດຄ່ອງກັບແຜນການເສດຖະກິດຂອງລັດ. ພ້ອມກັນນັ້ນ, ລັດກໍຊຸກຍູ້ສົ່ງເສີມ ແລະ ຊ່ວຍເຫຼືອເຂົາເຈົ້າດັດສ້າງຕາມສັງຄົມນິຍົມດ້ວຍຮູບການລັດ, ເອກະຊົນຮ່ວມທຸລະກິດ ແລະ ບັນດາຮູບການດັດສ້າງອື່ນໆ" (ໂຮ່ຈີມິນ, 2019, ໜ້າ 230). ຍ້ອນແນວນັ້ນ, ເສດຖະກິດມີການຂະຫຍາຍຕົວ ກໍຕ້ອງໄດ້ມີການຄົ້ນ ຄວ້າຊອກຫາບັນດາປັດໄຈທີ່ໜັກແໜ້ນ ເພື່ອສ້າງກົດໝາຍໃນການຄຸ້ມຄອງ ແລະ ສົ່ງເສີມເສດຖະກິດຢ່າງເໝາະສົມ ເຮັດໃຫ້ເສດຖະກິດ-ສັງຄົມ ມີຄວາມຈະເລີນກ້າວໜ້າ, ປະເທດຊາດໄດ້ຮັບການພັດທະນາ.

3). ການສ້າງ ແລະ ປັບປຸງກົດໝາຍ ບົນພື້ນຖານຄວາມສອດຄ່ອງກັບສັນຍາສາກົນ. ໃນ "ຂະບວນສັນຕິພາບໂລກ ນັບວັນຂະຫຍາຍ ຕົວ ແລະ ຍາດໄດ້ໄຊຊະນະສະຫງ່າງາມ ໃນພາລະກິດຕໍ່ສູ້ໃຫ້ນະໂຍ ບາຍຢູ່ຮ່ວມກັນໃນສັນຕິພາບ ແລະຮ່ວມມືສາກົນ" (ໂຮ່ຈີມິນ, 2019, ໜ້າ 299). “ຕໍ່ກັບບັນຫາສາກົນກໍເຊັ່ນດຽວກັນກັບພາຍໃນປະເທດ ຕ້ອງປົກສານຳກັນໃຫ້ມີຫຼັກໝັ້ນໜັກແໜ້ນ ແລະ ວິທີສັງເກດຢ່າງຖືກຕ້ອງ” (ໂຮ່ຈີມິນ, 2019, ໜ້າ 299). ສະນັ້ນ, ເພື່ອເປັນການຫ້າມບໍ່ໃຫ້ລັດອື່ນເຂົ້າແຊກແຊງ, ການປົກປ້ອງສິດທິມະນຸດ, ເພື່ອຍົກສູງຄວາມຮັບຜິດຊອບຂອງລັດ ໃນສາຍພົວພັນກັບສິດທິມະນຸດ, ຈຳກັດການຕັດຮອນແບບຕາມລຳພັງໃຈໂດຍລັດ ເພື່ອເຮັດໃຫ້ໂລກມີສັນຕິ ພາບ, ມິດຕະພາບທີ່ເທົ່າທຽມກັນ, ສະເໝີພາບພາຍໃຕ້ກົດໝາຍ.

4). ການສ້າງ ແລະ ປັບປຸງກົດໝາຍຢູ່ໃນຂອບເຂດສິດ ຂອງອົງການທີ່ມີສິດອອກກົດໝາຍ. "ເພື່ອປັບປຸງຮ່າງລັດຖະທຳມະນູນ, ກໍ ຍັງມີຫຼາຍຄຳເຫັນທີ່ປະກອບກ່ຽວກັບບັນຫາລະອຽດອື່ນໆ ທີ່ຂຶ້ນກັບຂອບເຂດຂອງກົດໝາຍ ຫຼື ຂອບເຂດການເຄື່ອນໄຫວ ຂອງບັນດາອົງການລັດ" (ໂຮ່ຈີມິນ, 2019, ໜ້າ 424-425). ໝາຍຄວາມວ່າອົງການໃດອອກກົດໝາຍ ກໍຕ້ອງໃຫ້ກຳນົດຂອບເຂດທີ່ສອດຄ່ອງກັບວຽກງານຂອງຕົນ ໂດຍມີການປະສານສົມກັບອົງການທີ່ໃກ້ຄຽງກັບອົງການຂອງຕົນ ເພື່ອຮັບປະກັນການສ້າງ ແລະ ປັບປຸງກົດໝາຍທີ່ກຳນົດຂອບເຂດສິດ ແລະ ພາລະບົດບາດ ບໍ່ໃຫ້ຊ້ຳຊ້ອນກັບວຽກງານຂອງອົງການອື່ນ.

5). ການສ້າງ ແລະ ປັບປຸງກົດໝາຍ ມີແຜນການ ແລະ ປະຕິ ບັດຕາມຂັ້ນຕອນການສ້າງ ແລະ ປັບປຸງກົດໝາຍ. "ສະພາ ແຫ່ງຊາດ ໄດ້ຮັບຮອງເອົາໂຄງການ 3 ປີ ຟື້ນຟູເສດຖະກິດ, ແຜນການ 3 ປີ ພັດທະນາເສດຖະກິດ-ວັດທະນະທຳເບື້ອງຕົ້ນ ແລະ ບັນດານະໂຍ ບາຍພັດທະນາ ແລະ ດັດສ້າງເສດຖະກິດຕາມ ສັງຄົມນິຍົມ, ບັນດາກົດໝາຍ ກ່ຽວກັບສິດເສລີພາບ ປະຊາທິປະໄຕ ແລະອື່ນໆ" (ໂຮ່ຈີມິນ, 2019, ໜ້າ 417). ອົງການໃດທີ່ມີສິດສະເໜີສ້າງກົດໝາຍຕ້ອງສ້າງແຜນການສ້າງ-ປັບປຸງກົດໝາຍ ເພື່ອສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອ ຮັບຮອງແຜນການເຄື່ອນໄຫວ ແລະ ແຜນງົບ ປະມານ ຂອງ ຄະນະຮັບຜິດຊອບສ້າງຮ່າງກົດໝາຍ; ພິຈາລະນາໂຄງປະກອບ ແລະ ເນື້ອໃນຂອງຮ່າງກົດໝາຍ.

6). ການສ້າງ ແລະ ປັບປຸງກົດໝາຍ ຮັບປະກັນຄວາມໂປ່ງ ໃສ, ເປີດເຜີຍ, ມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ, ເສີມຂະຫຍາຍປະຊາທິປະໄຕ ແລະ ຍາດແຍ່ງຄຳເຫັນຢ່າງກວ້າງ ຂວາງ. "ບັນດາຄຳຄິດຄຳເຫັນທີ່ປະຊາຊົນໄດ້ປະກອບນັ້ນ ກໍໄດ້ຮັບ ການຄົ້ນຄວ້າ, ສົມທະນາຈາກຳມາທິການດັດແກ້ລັດຖະທຳມະນູນ ຢ່າງລະອຽດ, ຖີ່ຖ້ວນ ແລະ ບົນພື້ນຖານດັ່ງກ່າວ ພວກຂ້າພະເຈົ້າ ໄດ້ປັບປຸງຮ່າງອີກເທື່ອໜຶ່ງ" (ໂຮ່ຈີມິນ, 2019, ໜ້າ 404). ຊຶ່ງໄດ້ ສະແດງເຖິງທຸກຄົນ ລ້ວນແຕ່ມີຄວາມສະເໝີພາບ, ມີເງື່ອນໄຂ ແລະໂອກາດເທົ່າທຽມກັນ ໃນການປະຕິບັດສິດເສລີພາບ, ປະຊາທິປະໄຕ, ເຖິງແມ່ນວ່າສິດການອອກກົດໝາຍ ຂຶ້ນກັບ ອົງການລັດທີ່ມີສິດອຳນາດ, ແຕ່ຜູ້ສ້າງກົດໝາຍທີ່ແທ້ຈິງ ຍັງແມ່ນ ປະຊາຊົນ "ຂອບເຂດສິດອຳນາດທຸກຢ່າງລ້ວນແຕ່ເປັນຂອງ ປະຊາຊົນ" (ໂຮ່ຈີມິນ, 2018, ໜ້າ 265). ເນື້ອແທ້ ແມ່ນຢາກທາບ ທາມຄຳຄິດຄຳເຫັນຢ່າງກວ້າງ ຂວາງ ຊຶ່ງເຫັນໄດ້ຄວາມມຸ່ງມາດ ປາຖະໜາຂອງປະຊາຊົນ, ຮູບການປະຊາທິປະໄຕໂດຍກົງ ເພື່ອກຳ ນົດໄວ້ໃນກົດໝາຍ.

7). ການສ້າງ ແລະ ປັບປຸງກົດໝາຍ ຮັບປະກັນລັກສະນະ ຊາດ, ວິທະຍາສາດ ແລະ ມະຫາຊົນ. "ຄະນະກຳມາທິການດັດແກ້ ລັດຖະທຳມະນູນ ແລະ ກົດໝາຍ ໄດ້ຮັບຈົດໝາຍປະກອບຄຳ ຄິດຄຳເຫັນຫຼາຍສະບັບຈາກບຸກຄົນ ແລະ ລວມໝູ່" (ໂຮ່ຈີມິນ, 2019, ໜ້າ 404). ສະນັ້ນ, ເຮັດໃຫ້ກົດໝາຍທີ່ສ້າງຂຶ້ນບົນພື້ນຖານ ສອດ ຄ່ອງກັບສະພາບຄວາມເປັນຈິງໃນແຕ່ລະໄລຍະ.

2. ເນື້ອໃນແນວຄິດ ກ່ຽວກັບການໂຄສະນາ, ສຶກສາອົບຮົມ ດ້ວຍກົດໝາຍ.

ປະທານ ໂຮ່ຈີມິນ ໄດ້ຊີ້ແຈງວ່າ: "ໂຄສະນາ ຫຼື ສຶກສາອົບ ຮົມ ການເມືອງໃຫ້ກັບປະຊາຊົນ, ເຮັດໃຫ້ເຂົາເຈົ້າຮ່ວມສາມັກຄີກັນຢູ່ ອ້ອມຂ້າງລັດຖະບານໃຫ້ແໜ້ນແຟ້ນ" (ໂຮ່ຈີມິນ, 2018, ໜ້າ 15). ເພື່ອເຮັດໃຫ້ການໂຄສະນາສຶກສາອົບຮົມ, ເຜີຍແຜ່ແນວທາງນະ ໂຍ ບາຍຂອງພັກ ແລະ ກົດໝາຍຂອງລັດ ຢ່າງກວ້າງຂວາງ ແລະທົ່ວເຖິງ ດ້ວຍຫຼາຍຮູບການ ແລະ ວິທີທີ່ເໝາະສົມກັບແຕ່ລະເປົ້າໝາຍ, ແຕ່ ລະຂົງເຂດ, ແຕ່ລະທ້ອງຖິ່ນຕາມເງື່ອນໄຂສະພາບຄວາມເປັນຈິງຂອງ ສັງຄົມ ແນໃສ່ຍົກລະດັບຄວາມຮູ້ ແລະ ສ້າງສະຕິທາງດ້ານກົດໝາຍ ໃຫ້ແກ່ພົນລະເມືອງທຸກຄົນ ເຮັດໃຫ້ອົງການຈັດຕັ້ງພັກ-ລັດ,ບັນດາອົງ ການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ພົນລະ ເມືອງທຸກຄົນ ເຄື່ອນໄຫວຢູ່ພາຍໃຕ້ລັດຖະທຳມະນູນ ແລະກົດໝາຍ; ໃນນັ້ນ, ປະທານ ໂຮ່ຈີມິນ ໄດ້ໃຫ້ທັດສະນະວ່າ: "ການປະກາດໃຊ້ກົດໝາຍ ສະບັບນີ້ ຍັງບໍ່ທັນຖືວ່າວຽກງານທຸກຢ່າງໄດ້ສຳເລັດແລ້ວ, ຫາກຍັງ ຕ້ອງໂຄສະນາ, ສຶກສາອົບຮົມຍາວນານ ຈຶ່ງປະຕິບັດໄດ້ຢ່າງດີ" (ໂຮ່ຈີ ມິນ, 2019, ໜ້າ 335, 336). ເຖິງວ່າຈະມີກົດໝາຍຖືກຕ້ອງ ແລະ ສອດຄ່ອງປານໃດກໍຕາມ ຖ້າຫາກກົດໝາຍເຫຼົ່ານັ້ນ ບໍ່ໄດ້ນຳມາ ໂຄສະນາ ແລະ ເຜີຍແຜ່ໃຫ້ສັງຄົມຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ, ກົດໝາຍເຫຼົ່ານັ້ນ ກໍຈະກາຍເປັນເອກະສານທີ່ບໍ່ມີຄວາມໝາຍຫຍັງ; ດ້ວຍເຫດນີ້, ການໂຄສະນາສຶກສາອົບຮົມດ້ວຍກົດໝາຍ ແມ່ນການ ອະທິບາຍ, ຊີ້ແຈງ, ແນະນຳ, ສະໜອງຂໍ້ມູນ-ຂ່າວສານ, ຕອບຂໍ້ຂ້ອງ ໃຈ ແລະ ໃຫ້ຄຳປຶກສາ ກ່ຽວກັບເນື້ອໃນ ຂອງລັດຖະທຳມະນູນ ແລະ ກົດໝາຍ ໃຫ້ແກ່ພົນລະເມືອງໄດ້ຮັບຮູ້, ເຂົ້າໃຈຢ່າງງ່າຍດາຍ ເຮັດໃຫ້ ວຽກງານດັ່ງກ່າວດຳເນີນໄປຢ່າງເປັນລະບົບ, ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ສະກັດກັ້ນ ແລະ ຕ້ານປາກົດການຫຍໍ້ທໍ້ໃນ ສັງຄົມ ເປັນການຍົກສູງປະສິດທິພາບໃນການຄຸ້ມຄອງລັດ, ຄຸ້ມຄອງ ສັງຄົມດ້ວຍກົດໝາຍ, ປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງ ຄົມ ເພື່ອປົກປັກຮັກສາຄວາມສະຫງົບ, ຄວາມເປັນ ລະບຽບຮຽບຮ້ອຍ ແລະ ຍຸຕິທຳໃນສັງຄົມ. ສະນັ້ນ, ຜູ້ທີ່ເຮັດວຽກ ງານໂຄສະນາສຶກສາອົບຮົມເຜີຍແຜ່ກົດໝາຍ ຍິ່ງມີຄວາມສຳຄັນເພື່ອ ສຸມທຸກສະຕິປັນຍາເຂົ້າໃນການຄົ້ນຄວ້າວິຊາສະເພາະຢ່າງເລິກເຊິ່ງ ທາງດ້ານເນື້ອໃນ, ຮູບການ, ວິທີການ, ເກັບກຳສະພາບການຂອງແຕ່ ລະກຸ່ມເປົ້າໝາຍໃຫ້ມີຄວາມໜັກແໜ້ນ ເພາະວ່າລະດັບຄວາມຮູ້, ຄວາມສາມາດຂອງແຕ່ລະກຸ່ມຄົນໃນສັງຄົມມີຄວາມແຕກຕ່າງ ກັນເຊັ່ນ: ນັກຮຽນຮູ້, ປັນຍາຊົນ, ພໍ່ຄ້າຊາວຂາຍ, ຊາວນາ, ປະຊາຊົນ ເຂດຫ່າງໄກສອກຫຼີກ ເພາະວ່າກຸ່ມເປົ້າໝາຍເຫຼົ່ານັ້ນ ເຮົາຈະຕ້ອງນຳ ໃຊ້ວິທີການ, ຮູບການຄືແນວໃດ ເພື່ອສຶກສາອົບຮົມ ແລະ ໂຄສະນາ

ເຜີຍແຜ່ກົດໝາຍຈຶ່ງຈະເໝາະສົມ,ຮັບປະກັນໃຫ້ເຂົາເຈົ້າສາມາດເຂົ້າ ເຖິງກົດໝາຍ ແລະ ສ້າງສະຕິປຸກຈິດສຳນຶກການເຄົາລົບ ແລະ ປະຕິບັດກົດໝາຍ ໃຫ້ມີຄວາມເຂັ້ມງວດສູງຂຶ້ນ, ເຮັດໃຫ້ກົດໝາຍ ຄຸ້ມຄອງທຸກການເຄື່ອນໄຫວ, ທຸກການຈັດຕັ້ງຂອງສັງຄົມ, ປະຊາຊົນທຸກຄົນ. ເຮັດໃຫ້ທຸກການເຄື່ອນໄຫວທີ່ມີການພົວພັນ ທາງສັງຄົມ, ທຸກຂົງເຂດຂອງຊີວິດການເປັນຢູ່ ລ້ວນແຕ່ຕ້ອງຢູ່ໃຕ້ ການຄຸ້ມຄອງຂອງກົດໝາຍ ໂດຍການເຄື່ອນໄຫວທຸກວຽກງານພາຍ ໃຕ້ກົດໝາຍ ນັ້ນຄືຄວາມຈຳເປັນພາວະວິໄສ ເພື່ອເຮັດໃຫ້ສັງຄົມມີ ຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ ແລະ ຍຸຕິທຳ.

3. ເນື້ອໃນແນວຄິດ ກ່ຽວກັບການນຳໃຊ້ກົດໝາຍ.

ການນຳໃຊ້ກົດໝາຍ ແມ່ນຮູບການໜຶ່ງໃນການປະຕິບັດກົດ ໝາຍ, ໃນນັ້ນ ເຈົ້າໜ້າທີ່ທີ່ເຮັດວຽກງານຂະບວນການປົກປ້ອງ ຄວາມຍຸຕິທຳ ແມ່ນໄດ້ນຳໃຊ້ສິດທາງດ້ານກົດໝາຍ ເພື່ອປົກປ້ອງ ບັນດາສິດແລະ ຜົນປະໂຫຍດຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ. ການນຳໃຊ້ກົດໝາຍເພື່ອຈັດຕັ້ງສັງຄົມ ແລະ ໃຊ້ສິດອຳນາດບັງຄັບຕໍ່ ການກະທຳທີ່ລະເມີດກົດໝາຍ, ປະທານ ໂຮ່ຈິມິນ ຮຽກຮ້ອງກົດໝ າຍຕ້ອງລົງ ໂທດຜູ້ທີ່ບໍ່ຊື່ສັດ, ບໍ່ວ່າຜູ້ນັ້ນ ຢູ່ໃນຖານະຕຳແໜ່ງໃດ, ປະກອບອາ ຊີບຫຍັງ. ພ້ອມກັນນັ້ນ, ກົດໝາຍກໍຕ້ອງເປັນບ່ອນອີງ ໃນຈັດຕັ້ງແລະ ດຳເນີນການເຄື່ອນໄຫວຂອງລັດ ໃນການຄຸ້ມຄອງ ລັດ, ຄຸ້ມຄອງສັງຄົມ. ຄຽງຄູ່ກັນນັ້ນ, ຖ້າເຈົ້າໜ້າທີ່ເຮັດວຽກງານໃນ ຂະແໜງການຍຸຕິທຳ ເປັນຕົ້ນແມ່ນ: ເຈົ້າໜ້າທີ່ສືບສວນ-ສອບສວນ , ອົງ ການໄອຍະການປະຊາຊົນ, ສານປະຊາຊົນ ແລະ ພາກສ່ວນ ປະຕິບັດ ຄຳຕັດສິນຂອງສານຫາກບໍ່ນຳໃຊ້ສິດຂອງຕົນ ກົດໝາຍກໍ ບໍ່ມີຄວາມໝາຍ, ເຮັດໃຫ້ສັງຄົມຂາດຄວາມເຊື່ອໝັ້ນຈາກອົງການ ປົກປ້ອງກົດໝາຍ. ປະທານ ໂຮ່ຈິມິນ ໄດ້ໃຫ້ທັດສະນະວ່າ: "ລັດ ຮັບປະກັນສິດເສລີພາບປະຊາທິປະໄຕ ຂອງພົນລະເມືອງ, ແຕ່ຫ້າມ ບໍ່ໃຫ້ສວຍໃຊ້ບັນດາສິດເສລີພາບປະຊາທິປະໄຕ ເພື່ອລ່ວງລະເມີດ ຜົນປະໂຫຍດຂອງລັດ, ຂອງປະຊາຊົນ ຢ່າງເດັດຂາດ" (ໂຮ່ຈິມິນ, 2019, ໜ້າ 421). ພ້ອມກັນນັ້ນ, ໃນການຄຸ້ມຄອງລັດ, ຄຸ້ມຄອງ ເສດຖະກິດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ຈຶ່ງຮຽກຮ້ອງໃຫ້ລັດນຳ ໃຊ້ກົດໝາຍເຂົ້າໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝ າຍ ເພື່ອເຮັດໃຫ້ສັງຄົມມີຄວາມສີວິໄລ ແລະ ຍຸຕິທຳ.

ປະທານ ໂຮ່ຈິມິນ ໄດ້ເວົ້າວ່າ "ຕໍ່ພວກທີ່ດື້ດ້ານຫົວແຂງ ບໍ່ ຍອມປ່ຽນແປງແມ່ນອຳນາດການປົກຄອງຕ້ອງໃຊ້ລະບຽບກົດໝາຍ, ລະບຽບກົດໝາຍ ແມ່ນລະບຽບກົດໝາຍຂອງປະຊາຊົນ, ນຳໃຊ້ ເພື່ອສະກັດກັ້ນການກະທຳທີ່ເປັນອັນຕະລາຍຕໍ່ປະຊາຊົນ, ເພື່ອປົກ ປ້ອງຜົນປະໂຫຍດລວມ ຂອງປະຊາຊົນຈຳນວນຫຼວງຫຼາຍ" (ໂຮ່ຈິມິນ , 2019, ໜ້າ 282). ລັດອຳນາດແຫ່ງກົດໝາຍ ແມ່ນລັດທີ່ບໍລິຫານ ແລະ ຄຸ້ມຄອງສັງຄົມດ້ວຍກົດໝາຍ ເພື່ອເຮັດໃຫ້ອຳນາດກົດໝາຍໄດ້ ແຊກຊຶມເຂົ້າໃນການຈັດຕັ້ງ ແລະ ການເຄື່ອນໄຫວຂອງລັດ ໃຫ້ມີ ຄວາມເປັນເອກະລາດ, ເສລີພາບ, ປະຊາທິປະໄຕ ແລະ ມີຄວາມ ຍຸຕິທຳ. ສະແດງເຖິງລັດອຳນາດແຫ່ງກົດໝາຍ ແມ່ນການຖືເອົາກົດໝ າຍ ເຂົ້ານຳໃຊ້ໃນການເຄື່ອນໄຫວປະຕິບັດທຸກວຽກງານ ແລະ ເປັນ ເຄື່ອງມືແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນສັງຄົມ ເພື່ອເຮັດໃຫ້ສັງຄົມ ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມສະຫງົບສຸກ, ມີຄວາມ ຍຸຕິທຳ, ປາສະຈາກການເອົາລັດເອົາປຽບຊຶ່ງກັນແລະກັນ, ມີຄວາມ ເທົ່າທຽມ ແລະ ສະໝີພາບກັນ, ສັງຄົມມີຄວາມສີວິໄລ; ພ້ອມກັນ ສ້າງສາພັດທະນາເສດຖະກິດ-ສັງຄົມ, ເຮັດໃຫ້ຊີວິດການເປັນຢູ່ຂອງ ປະຊາຊົນດີຂຶ້ນ. ຖ້າຫາກມີກົດໝາຍແລ້ວ ນຳໃຊ້ໄປທາງທີ່ບໍ່ຖືກຕ້ອງ ຫຼື ບໍ່ເອົາກົດໝາຍມານຳໃຊ້ ກົດໝາຍນັ້ນກໍເປັນພຽງຮູບການ ແລະ ເປັນເຈ້ຍເປົ່າເທົ່ານັ້ນ ແລະ ກົດໝາຍກໍຈະປາສະຈາກປະ ສິດທິພາບ ແລະ ປະສິດທິຜົນດີບໍ່ມີຄວາມສັກສິດທາງດ້ານກົດໝາຍ.

4. ເນື້ອໃນແນວຄິດກ່ຽວກັບການຕິດ, ຕາມກວດກາການ ເຄົາລົບ ແລະ ປະຕິບັດກົດໝາຍ.

1). ການຕິດຕາມ, ກວດກາ ແມ່ນການຕິດຕາມ, ກວດກາ ການເຄື່ອນໄຫວ ຂອງອົງການບໍລິຫານລັດ ໃນການສັງເກດຕີລາຄາ ການຈັດຕັ້ງປະຕິບັດບັນດາຂໍ້ກຳນົດ, ລະບຽບການ, ກົດໝາຍຕ່າງໆທີ່ ອົງການບໍລິຫານອາງອອກ ຂອງບັນດາການຈັດຕັ້ງ ແລະ ບຸກຄົນທີ່ມີ ໜ້າທີ່ຮັບຜິດຊອບ, ບົນພື້ນຖານນັ້ນ ປະທານ ໂຮ່ຈິມິນ ໄດ້ຊີ້ບອກ ວ່າ: “ຖ້າການຈັດຕັ້ງກວດກາດ້ວຍຄວາມເອົາໃຈໃສ່ຢ່າງຮອບຄອບ ກໍ ຄືກັບມີທອນໄຟທີ່ຮູ້ແຈ້ງຈຸດດີ ແລະ ຈຸດອ່ອນມີເທົ່າໃດ, ພະນັກງານ ເຮົາມີເທົ່າໃດ ແລະ ເປັນແນວໃດ ກໍຈະເຫັນໄດ້ຢ່າງຈະແຈ້ງ. ອາດເວົ້າ ໄດ້ວ່າ: ຈຸດອ່ອນໃນວຽກງານຂອງພວກເຮົາ, 9/10 ແມ່ນຍ້ອນຂາດ ການກວດກາ, ຖ້າຈັດຕັ້ງການກວດກາດ້ວຍຄວາມເອົາໃຈໃສ່ຢ່າງຮອບ ຄອບ, ວຽກງານຂອງພວກເຮົາຈະກ້າວໜ້າສິບເທົ່າຮ້ອຍເທົ່າ” (ໂຮ່ຈິ ມິນ, 2018, ໜ້າ 521). ຊຶ່ງ "ບັນດາຄະນະກວດກາລັດ ເຮັດວຽກດີ ຫຼື ບໍ່ດີ, ໄວ ຫຼື ຊັກຊ້າ, ກ່ອນອື່ນໝົດ ກໍຍ້ອນແຕ່ລະຄະນະກວດກາ ດັ່ງກ່າວ ພະຍາຍາມຫຼາຍ ຫຼື ໜ້ອຍ, ແຕ່ກໍຍັງແມ່ນຍ້ອນກະໂຕຂອງ ຂັ້ນນຳ ມີຄວາມເອົາໃຈໃສ່ຕໍ່ວຽກງານກວດກາລັດ ຫຼືບໍ່ ບັນດາການນຳ ຂັ້ນຕ່າງໆ" (ໂຮ່ຈິມິນ, 2011, ໜ້າ 457) ຕ້ອງຊ່ວຍເຫຼືອບັນດາຄະ ນະກວດກາລັດ ເຮັດວຽກໃຫ້ດີ, ຕ້ອງເອົາໃຈໃສ່ນຳພາວຽກງານກວດ ກາລັດ, ຊຶ່ງປະທານ ໂຮ່ຈິມິນ ໄດ້ຊີ້ແຈງໃຫ້ເຫັນວ່າ ຢາກໃຫ້ວຽກງານ

ມີຄຸນນະພາບ ຕ້ອງໄດ້ເອົາໃຈໃສ່ປັບປຸງວຽກງານຕິດຕາມ, ກວດກາ ຢ່າງເປັນກະຕິ ເພື່ອ “ຢາກຕ້ານພະຍາດອາດຍາສິດ, ພະຍາດນັ່ງຢູ່ກັບບ່ອນ, ຢາກຮູ້ວ່າມະຕິຈະໄດ້ຮັບການຈັດຕັ້ງປະຕິບັດ ຫຼື ບໍ່, ປະຕິບັດຖືກຕ້ອງ ຫຼື ບໍ່, ຢາກຮູ້ວ່າໃຜສູ້ຊົນເຮັດ,ໃຜເຮັດພໍຮິດ ກໍມີແຕ່ວິທີດຽວເທົ່ານັ້ນຄື ຕ້ອງກວດກາ; ກວດກາດີເທົ່າໃດ ກໍຈະເຫັນໄດ້ທັງໝົດຄວາມບົກພ່ອງ, ຍິ່ງໄປກວ່ານັ້ນ ກວດກາດີ ກໍເຮັດໃຫ້ຄວາມບົກ ພ່ອງຫຼຸດລົງ” (ໂຮ່ຈິມິນ, 2011, ໜ້າ 260). ສະນັ້ນ, ການກວດກາຈຶ່ງມີຄວາມສຳຄັນໃນທຸກອົງການຈັດຕັ້ງພັກ-ລັດ, ວຽກງານດັ່ງກ່າວຈະອອກມາດີ ຫຼື ບໍ່ດີ, ຈະສຳເລັດ ຫຼື ບໍ່ສຳເລັດ, ປະຕິບັດຢ່າງຖືກຕ້ອງ ຫຼືບໍ່ ກໍຕ້ອງໄດ້ຜ່ານການຕິດຕາມກວດກາ ຈຶ່ງສາມາດເຫັນໄດ້. “ອົງການລັດທັງໝົດ ຕ້ອງອີງໃສ່ປະຊາຊົນ, ພົວພັນສະໜິດແໜ້ນກັບປະຊາຊົນ, ຮັບຟັງຄວາມເຫັນ ແລະ ຍອມຢູ່ໃຕ້ການຕິດ ຕາມກວດກາຂອງປະຊາຊົນ” (ໂຮ່ຈິມິນ, 2011, ໜ້າ 419) ເພື່ອສ້າງຄວາມເຊື່ອໝັ້ນ, ໄວ້ວາງໃຈຈາກປະຊາຊົນ, ຮັບປະກັນໄດ້ການ ນຳພາຂອງພັກ ແລະ ການຄຸ້ມຄອງຂອງລັດ.

2). ການເຄົາລົບກົດໝາຍ ແມ່ນຄວາມເຂົ້າໃຈກ່ຽວກັບກົດໝາຍ ແລະ ເຊື່ອຖືຕໍ່ກົດໝາຍ; ໃຫ້ຮູ້ວ່າກົດໝາຍເຫຼົ່ານັ້ນ ອະນຸຍາດໃຫ້ການຈັດຕັ້ງ ແລະ ບຸກຄົນ ເຮັດຫຍັງໄດ້ແດ່, ມີອັນໃດແດ່ທີ່ຫ້າມ ບໍ່ໃຫ້ເຮັດ ແລະ ຖ້າມີການລະເມີດ ຈະໄດ້ຮັບໂທດແນວໃດ. ການເຄົາລົບກົດໝາຍ ແມ່ນການເຮັດໃຫ້ປະຊາຊົນຮັບຮູ້, ເຂົ້າໃຈກ່ຽວກັບກົດໝາຍ, ຮູ້ນຳໃຊ້ສິດ ແລະ ພັນທະຂອງຕົນ. ທຸກການກະທຳທີ່ສ້າງຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ສິດ ແລະ ຜົນປະໂຫຍດຂອງລວມໝູ່ ແລະ ຂອງພົນລະເມືອງ ລ້ວນແຕ່ຖືກຕັດປັບດ້ວຍກົດໝາຍ. ຕ້ອງໄດ້ "ເຄົາລົບປະຕິບັດຕາມກົດໝາຍຂອງລັດ " (ໂຮ່ຈິມິນ, 2019, ໜ້າ 281); ໃນນັ້ນ, "ພົນລະເມືອງມີພັນທະເຄົາ ລົບຊັບສິນສ່ວນລວມ, ເສຍພາສີຕາມກົດໝາຍ, ປະຕິບັດພັນທະການທະຫານ, ປົກປັກຮັກສາປະເທດຊາດ" (ໂຮ່ຈິມິນ, 2019, ໜ້າ 421). ບັນດາກົດໝາຍ ໄດ້ກຳນົດການເຄື່ອນໄຫວຂອງອົງການຈັດ ຕັ້ງຕ່າງໆ ໃນການເຄົາລົບລະບຽບການ ແລະ ກົດໝາຍ ເພື່ອບໍ່ປະຕິ ບັດການເຄື່ອນໄຫວໃນສິ່ງທີ່ກົດໝາຍຫ້າມ.

3). ການປະຕິບັດກົດໝາຍ ແມ່ນພຶດຕິກຳຂອງຄົນ ທີ່ໄດ້ປະຕິບັດສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງບັນດາຂໍ້ກຳນົດກົດໝາຍ. ໃນນັ້ນ, "ສະພາລັດຖະບານເປັນອົງການປະຕິບັດກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ເປັນອົງການບໍລິຫານສູງສຸດຂອງລັດ ມີຄວາມຮັບຜິດຊອບ ແລະ ລາຍງານການປະຕິບັດວຽກງານສະພາແຫ່ງຊາດ" (ໂຮ່ຈິມິນ, 2019, ໜ້າ 418). ບັນດາອົງການຈັດຕັ້ງລັດ ປະຕິບັດກົດໝາຍຢ່າງຖືກຕ້ອງ ແລະ ຕອບສະໜອງໃຫ້ແກ່ຜົນປະໂຫຍດລວມຂອງລັດ, ຂອງສັງຄົມ ຊຶ່ງເປັນ "ໜ້າທີ່ຂອງປະຊົນຊົນເຮົາ ແມ່ນປະຕິບັດລັດຖະທຳມະນູນສະບັບໃໝ່ໃຫ້ດີ" (ໂຮ່ຈິມິນ, 2019, ໜ້າ 436) ເພື່ອແນໃສ່ສ້າງຄວາມໝັ້ນຄົງໃຫ້ແກ່ລັດ ປະຊາທິປະໄຕປະຊາຊົນ ທີ່ປົກຄອງດ້ວຍລັດຖະທຳມະນູນ ແລະກົດໝາຍ, ເພື່ອເຮັດໃຫ້ລັດມີຄວາມເຂັ້ມແຂງ ແລະ ທັນສະໄໝທີ່ມີຄວາມກ້າວໜ້າຂຶ້ນເທື່ອລະກ້າວ, ຮັບປະກັນໃຫ້ການເຄື່ອນໄຫວວຽກງານຂອງລັດຢ່າງມີປະສິດທິພາບ, ມີຄວາມໂປ່ງໃສ ແລະ ຍຸຕິທຳ. ຍ້ອນແນວນັ້ນ, ໃນຂະບວນວິວັດການປະຕິບັດກົດໝາຍ, ປະ ທານ ໂຮ່ຈິມິນ ໄດ້ຮຽກຮ້ອງຕ້ອງຮັບປະກັນລັກສະນະພາວະວິໄສ, ຍຸຕິທຳ, ສະເໝີພາບ. ກົດໝາຍ ແມ່ນໃຫ້ໝົດທຸກຄົນປະຕິບັດທີ່ສອດ ຄ່ອງກັບບັນດາຂໍ້ກຳນົດຂອງກົດໝາຍ. ນອກຈາກນັ້ນ, ການປະຕິບັດກົດໝາຍ "ມີໜ້າທີ່ສ້າງຕັ້ງສານປະຊາຊົນ ເພື່ອລົງໂທດຜູ້ກະທຳຜິດ, ລະເມີດຕໍ່ກົດໝາຍ" (ໂຮ່ຈິມິນ, 2018, ໜ້າ 15). ໃນການ “ພິຈາລະ ນາ: ຖ້າບໍ່ລົງໂທດເຄັ່ງຄັດຕໍ່ກັບການເຄື່ອນໄຫວດັ່ງກ່າວ ໃຫ້ຖືກຕາມກົດໝາຍແລ້ວ ປະຊາຊົນຈະບໍ່ສາມາດຫຼີກພົ້ນຈາກການດຶງດູດໄປຕາມແບບຢ່າງຊົ່ວຮ້າຍຄືແນວນີ້” (ໂຮ່ຈິມິນ, 2017, ໜ້າ 545). ການເຄື່ອນໄຫວປະຕິບັດກົດໝາຍ ແມ່ນພື້ນຖານທາງດ້ານກົດໝາຍ ເພື່ອເຮັດໃຫ້ບັນດາຂໍ້ກຳນົດຂອງກົດໝາຍປາກົດຜົນເປັນຈິງ ໃນການດຳລົງຊີວິດ, ສ້າງພື້ນຖານທາງດ້ານ ກົດໝາຍໃຫ້ແກ່ການເຄື່ອນໄຫວໃນພຶດຕິກຳຕົວຈິງຂອງກົດໝາຍ. ໃນນັ້ນ, ປະທານ ໂຮ່ຈິມິນ ຍັງໃຫ້ທັດສະນະວ່າ: "ການປະຕິບັດກົດໝາຍນີ້ ມີສອງດ້ານຕ້ອງໄດ້ເຮັດຄື: ດ້ານສະດວກງ່າຍດາຍ ຍ້ອນປະຊາຊົນເຮົາໄດ້ຮັບການສຶກສາອົບຮົມຈາກພັກ ໄດ້ມີຄວາມກ້າວໜ້າຫຼາຍແລ້ວ. ແຕ່ກໍມີຄວາມຫຍຸ້ງຍາກ ຍ້ອນຮີດຄອງປະເພນີເກົ່າແກ່ໄດ້ຊຶມເລິກ ຢູ່ໃນໝູ່ປະຊາຊົນມາຫຼາຍຊັ້ນຄົນແລ້ວ" (ໂຮ່ຈິມິນ, 2019, ໜ້າ 336). ໝາຍຄວາມວ່າ ມີບາງຊົນເຜົ່າ ຍັງມີຄວາມເຊື່ອຖືສາສະໜາຂອງຕົນ ຍັງທັນບໍ່ປະຖິ້ມ ຮີດຄອງປະເພນີ ທີ່ເຊື່ອຖືແບບງົມງວາຍແບບດັ່ງເດີມ, ຍັງບໍ່ທັນ ເຄົາລົບ ແລະ ປະຕິບັດໄປຕາມກົດໝາຍທີ່ໄດ້ກຳນົດ. ຍ້ອນແນວນັ້ນ, "ພົນລະເມືອງຕ້ອງມີພັນທະ, ເຄົາລົບ ແລະ ປະຕິບັດຕາມລັດຖະທຳມະນູນ, ກົດໝາຍ, ວິໄນອອກແຮງງານ, ຄວາມເປັນລະບຽບຮຽບຮ້ອຍໃນສາທາລະນະແລະ ບັນດາຂໍ້ກຳນົດໃນການດຳເນີນຊີວິດສັງຄົມ" (ໂຮ່ຈິມິນ, 2019. ໜ້າ 421). ດ້ວຍເຫດນັ້ນ, ການເຄົາລົບ ແລະ ປະຕິບັດກົດໝາຍທີ່ມີລັກ ສະນະຫຼັກການ ໂດຍລັດຄຸ້ມຄອງສັງຄົມດ້ວຍລັດຖະທຳມະນູນ ແລະກົດໝາຍ ຈຶ່ງມີຄວາມເຂັ້ມງວດ. ດັ່ງປະທານ ໂຮ່ຈິມິນ ໄດ້ໃຫ້ທັດສະ ນະວ່າ: "ພົນລະເມືອງລ້ວນແຕ່

ສະເໝີພາບຕໍ່ໜ້າກົດໝາຍ" (ໂຮ່ຈີມິນ, 2019, ໜ້າ 420). "ຖ້າວ່າ ທຸກຄົນຕ່າງກໍສະເໝີພາບຕໍ່ໜ້າກົດໝາຍຄືດັ່ງທຸກຄົນທັງຫຼາຍມັກ" (ໂຮ່ຈີມິນ, 2010, ໜ້າ 383), ນັ້ນກໍແມ່ນຄວາມມຸ່ງມາດປາຖະໜາ ຂອງທຸກສັງຄົມ ເພື່ອຢາກໃຫ້ສັງຄົມມີຄວາມຍຸຕິທຳສີວິໄລ; ຕ້ອງ ສະກັດກັ້ນ ແລະ ຕ້ານທຸກພຶດຕິກຳທີ່ເປັນການລະເມີດລັດຖະທຳ ມະນູນ ແລະ ກົດໝາຍ.

ສະນັ້ນ, ການຕິດຕາມ, ກວດກາການເຄົາລົບ ແລະ ປະຕິບັດ ກົດໝາຍ ແມ່ນການຕິດຕາມ, ກວດກາການເຄົາລົບ ແລະ ປະຕິບັດ ກົດໝາຍ ຂອງອົງການຈັດຕັ້ງລັດ ແລະ ພົນລະເມືອງ ມີການເຄົາລົບ ແລະ ປະຕິບັດຕາມລັດຖະທຳມະນູນ ແລະ ກົດໝາຍແລ້ວ ຫຼື ບໍ່ ເພື່ອຮັບປະກັນໃຫ້ມີຄວາມຖືກຕ້ອງ ແລະ ຍຸຕິທຳຂຶ້ນເທື່ອລະກ້າວ.

II. ເສີມຂະຫຍາຍແນວຄິດ ກ່ຽວກັບກົດໝາຍ ໃນນິພົນ ໂຮ່ຈີມິນ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນໃນຕໍ່ໜ້າ.

ແນວຄິດໂຮ່ຈີມິນ ແມ່ນລະບົບທັດສະນະໜຶ່ງທີ່ຮອບດ້ານ ແລະ ເລິກເຊິ່ງ ກ່ຽວກັບບັນດາບັນຫາພື້ນຖານ ຂອງການປະຕິວັດ ຫວຽດນາມ, ແມ່ນໝາກຜົນຂອງການໝູນໃຊ້ ແລະ ພັດທະນາຢ່າງ ມີຫົວຄິດປະດິດສ້າງ ຈາກທິດສະດີມາກ-ເລນິນ ເຂົ້າໃນເງື່ອນໄຂ ຕົວຈິງຂອງປະເທດ, ສືບທອດ ແລະ ພັດທະນາບັນດາຄຸນຄ່າທີ່ເປັນ ມູນ ເຊື້ອອັນດີງາມຂອງຊາດ, ຮັບເອົາສິ່ງຍອດຍິ່ງທາງດ້ານ ວັດທະນະທຳຂອງມະນຸດ ເປັນຊັບສິນດ້ານຈິດໃຈທີ່ໃຫຍ່ຫຼວງທີ່ ສຸດ ແລະ ປະເສີດທີ່ສຸດຂອງພັກ ແລະ ຂອງຊາດເຮົາ, ເປັນເຂັມຊີ້ ທິດເຍືອງທາງໃຫ້ພາລະກິດປະຕິວັດຂອງປະຊາຊົນເຮົາ ຍາດເອົາໄດ້ ໄຊຊະນະຕະຫຼອດມາ. ໃນນັ້ນ, ເພື່ອໝູນໃຊ້ແນວຄິດໂຮ່ຈີມິນ ກ່ຽວກັບກົດໝາຍ ເຂົ້າໃນຊີວິດການເປັນຢູ່ຕົວຈິງ ທີ່ມີການພົວພັນ ກັນໃນສັງຄົມ ແລະສັງຄົມ ໄດ້ມີການຂະຫຍາຍຕົວໄປຕາມກົນໄກ ເສດຖະກິດ-ສັງຄົມ ເກີດມີຄວາມຂັດແຍ່ງໃນສັງຄົມເພີ່ມຂຶ້ນ; ຈຸດປະສົງໃນການໝູນໃຊ້ແນວຄິດ ກ່ຽວກັບກົດໝາຍ ໃນນິພົນ ໂຮ່ ຈີມິນ ເພື່ອສ້າງຄວາມຮູ້ແລະ ເຂົ້າໃຈກ່ຽວກັບກົດໝາຍ ໃນການສ້າງ ແລະ ປັບປຸງກົດໝາຍ, ການໂຄສະນາອົບຮົມເຜີຍແຜ່ກົດໝາຍ, ການນຳໃຊ້ກົດໝາຍ ແລະການຕິດຕາມ, ກວດກາການເຄົາລົບ ແລະ ປະຕິບັດກົດໝາຍ, ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍ ກົດໝາຍ ໃຫ້ມີຄວາມເຂັ້ມງວດ, ເຮັດໃຫ້ອົງການຈັດຕັ້ງລັດ ເຄື່ອນ ໄຫວວຽກງານຕ່າງໆແລະ ເພື່ອແກ້ໄຂບັນຫາຂອງສັງຄົມ ໄປຕາມຂໍ້ ກຳນົດຂອງກົດໝາຍຢ່າງຖືກຕ້ອງ, ວ່ອງໄວ ແລະ ຍຸຕິທຳ.

ເພື່ອເຮັດໃຫ້ແນວຄິດປະທານ ໂຮ່ຈີມິນ ກ່ຽວກັບກົດໝາຍ ຕິດພັນເຂົ້າກັບການຮຽນ-ການສອນ ຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ຕ້ອງໄດ້ສຸມໃສ່ຊອກຫາວິທີແກ້ໄຂ ເພື່ອເຮັດ ໃຫ້ການຮຽນ-ການສອນ ມີຄຸນນະພາບ ແລະ ສາມາດຕອບສະໜອງ ໃນວຽກງານດັ່ງກ່າວ ເຂົ້າໃນຫຼັກສູດໃນລະບົບຮຽນຕ່າງໆ ໃຫ້ມີ ປະສິດທິພາບ ແລະ ປະສິດທິຜົນຄືດັ່ງນີ້:

1. ເສີມຂະຫຍາຍແນວຄິດ ກ່ຽວກັບການສ້າງ ແລະ ປັບປຸງ ກົດໝາຍ.

ປະທານ ໂຮ່ຈີມິນ ໄດ້ໃຫ້ທັດສະນະກ່ຽວກັບການສ້າງ ແລະ ປັບປຸງລັດຖະທຳມະນູນວ່າ: "ລັດຖະທຳມະນູນສະບັບທຳອິດຂອງ ປະເທດເຮົາ ແມ່ນສອດຄ່ອງກັບສະພາບການ ແລະ ໜ້າທີ່ປະຕິວັດໃນ ສະໄໝນັ້ນ. ມັນໄດ້ເຮັດສຳເລັດພາລະກຳຂອງມັນ. ແຕ່ທຽບໃສ່ ສະພາບການໃໝ່ ແລະ ໜ້າທີ່ການປະຕິວັດໃໝ່ໃນປັດຈຸບັນ ແມ່ນ ມັນບໍ່ສອດຄ່ອງອີກ. ຍ້ອນແນວນັ້ນ, ພວກເຮົາຈຶ່ງດັດແກ້ລັດຖະທຳ ມະນູນສະບັບດັ່ງກ່າວ" (ໂຮ່ຈີມິນ, 2019, ໜ້າ 411). ຕ້ອງໄດ້ເສີມ ຂະ ຫຍາຍບົດບາດຂອງລັດ ໃນການຈັດຕັ້ງຄຸ້ມຄອງລັດ, ຄຸ້ມຄອງ ສັງຄົມ. ສ້າງເປັນກົດໝາຍເພື່ອເປັນເຄື່ອງມືຮັບໃຊ້ ແລະ ຕອບສະໜ ອງຄວາມຮຽກຮ້ອງຕ້ອງການທີ່ຈຳເປັນຂອງປະຊາຊົນ. ບັນດາອົງການ ລັດ ທີ່ມີສິດອຳນາດໃນການກໍ່ສ້າງ ແລະ ປັບປຸງກົດໝາຍຢ່າງລວມສູນ , ກ່ອນອື່ນໝົດ ແມ່ນສະພາແຫ່ງຊາດ ຜັນຂະຫຍາຍລັດຖະທຳມະນູນ , ແນວ ທາງນະໂຍບາຍຂອງພັກ-ລັດ ສ້າງເປັນກົດໝາຍໃຫ້ທັນເວລາ ໃນແຕ່ລະໄລຍະ ໃຫ້ສົມກັບຄຳເວົ້າຂອງປະທານ ໂຮ່ຈີມິນ ໄດ້ໃຫ້ຂໍ້ ຄິດຕໍ່ພະນັກ ງານຜູ້ຄົ້ນຄວ້າສ້າງຮ່າງກົດໝາຍວ່າ: "ຕ້ອງລະວັງ ເພາະວ່າກົດໝາຍນີ້ພົວພັນເຖິງອະນາຄົດຂອງຄອບຄົວ, ຂອງສັງຄົມ, ຂອງເຊື້ອຊາດເຜົ່າພັນ" (ໂຮ່ຈີມິນ, 2019, ໜ້າ 336). ກົດໝາຍສ້າງ ຂຶ້ນຕ້ອງບໍ່ຂັດກັບລັດຖະທຳມະນູນ, ຂໍ້ກຳນົດຂອງຂັ້ນລຸ່ມ ບໍ່ຂັດກັບຂໍ້ ກຳນົດຂອງຂັ້ນເທິງ. ໃນການສ້າງ ແລະ ປັບປຸງກົດໝາຍຄວນ ເອົາໃຈໃສ່ແກ້ໄຂຄື:

1). ສ້າງ ແລະ ປັບປຸງກົດໝາຍໃນດ້ານເນື້ອໃນຕ້ອງຈະແຈ້ງ ຊັດເຈນຄົບຖ້ວນ, ເປັນລະບົບ, ຮັດກຸມ,ເຂົ້າໃຈງ່າຍ, ສອດຄ່ອງກັບ ສະພາບຕົວຈິງ ຕາມຫຼັກວິທະຍາສາດ ແລະ ສາມາດຈັດຕັ້ງປະຕິບັດ ໄດ້ເປັນພື້ນຖານໃຫ້ແກ່ການປົກຄອງ, ອົງການອຳນາດລັດຂັ້ນຕ່າງໆ ຕ້ອງມີຄວາມເຂັ້ມແຂງ ສາມາດປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຜູ້ທີ່ມີສິດສະເໜີສ້າງກົດໝາຍຢ່າງຖືກຕ້ອງ, ຄົບຖ້ວນເຕັມ ສ່ວນ ຕາມລັດຖະທຳມະນູນ ແລະ ກົດໝາຍທີ່ກຳນົດໄວ້.

2). ປັບປຸງການຈັດຕັ້ງບັນຈຸສັບຊ້ອນພະນັກງານ ແລະ ສ້າງບຸກ ຄະລາກອນໃຫ້ຖືກກັບວຽກ ແລະ ຕ້ອງເອົາພະນັກງານທີ່ໄດ້ຜ່ານການ ຮຽນກົດໝາຍມາ ແລະ ຍົກລະດັບວິຊາສະເພາະຢ່າງຕໍ່ເນື່ອງ ໃຫ້

ກາຍເປັນວິຊາສະເພາະ, ມີຄວາມຊໍານານງານໃຫ້ສົມຄູ່ກັບຄວາມຮູ້-ຄວາມສາມາດໃນການສ້າງ ແລະ ປັບປຸງກົດໝາຍ.

3). ສ້າງແຜນການສ້າງ ແລະ ປັບປຸງກົດໝາຍຕາມແຜນປະຈໍາປີ ແລະ ປະຈໍາ 5 ປີ ຕາມອາຍຸການຂອງສະພາແຫ່ງຊາດແຕ່ລະສະໄໝ ໃຫ້ທັນເວລາຕາມແຜນກໍານົດໄວ້ ແລະ ສອດຄ່ອງກັບສະພາບຕົວຈິງທີ່ເກີດຂຶ້ນ ແລະ ຜູ້ທີ່ມີສິດອໍານາດໃນການສະເໜີສ້າງ ແລະ ປັບປຸງກົດໝາຍ ຕ້ອງໄດ້ສຶມທຶບກັບກະຊວງຍຸຕິທໍາ, ລັດຖະບານ ແລະ ສະພາແຫ່ງຊາດຢ່າງກົມກຽວ ແລະ ປະຕິບັດໄປຕາມຫຼັກການ ແລະຂັ້ນຕອນ, ບາດກ້າວ ແລະ ເຕັກນິກຂອງກົດໝາຍວ່າດ້ວຍການສ້າງນິຕິກໍາ.

2. ເສີມຂະຫຍາຍແນວຄິດ ກ່ຽວກັບການໂຄສະນາສຶກສາອົບຮົມດ້ວຍກົດໝາຍ.

ຕ້ອງສົ່ງເສີມ ແລະ ຊຸກຍູ້ການໂຄສະນາ, ສຶກສາອົບຮົມກົດໝາຍໃຫ້ມີຈຸດສຸມ, ມີເປົ້າໝາຍໃຫ້ປະຊາຊົນບັນດາເຜົ່າຮັບຮູ້, ເຂົ້າໃຈ ແລະປະຕິບັດໃຫ້ຖືກຕ້ອງ, ເຂັ້ມງວດ ເພື່ອຮັບປະກັນຄວາມໝັ້ນ ຄົງໃຫ້ແກ່ລັດປະຊາທິປະໄຕປະຊາຊົນ ທີ່ປົກຄອງດ້ວຍກົດໝາຍ. ດັ່ງປະທານ ໂຮ່ຈິມິນ ໄດ້ໃຫ້ທັດສະນະວ່າ: "ສະເພາະບັນດາຜູ້ແທນສະພາປະຊາຊົນ ແລະ ບັນດາພະນັກງານ ຕ້ອງເຜີຍແຜ່ລັດຖະທໍາມະນູນ ຢ່າງລະອຽດ ແລະ ກວ້າງຂວາງຫໍ່ວເຖິງປະຊາຊົນ ແລະ ເປັນແບບຢ່າງໃນການຈັດຕັ້ງປະຕິບັດລັດຖະທໍາມະນູນ ແລະ ບັນດາລະ ບຽບກົດໝາຍ" (ໂຮ່ຈິມິນ, 2019, ໜ້າ 336). ຄຽງຄູ່ກັບການສຶກສາກົດໝາຍ ຕ້ອງຊຸກຍູ້ການສຶກສາອົບຮົມຄຸນສົມບັດ, ຍົກສູງສະຕິຕື່ນຕົວ ກ່ຽວກັບອຸດົມຄະຕິປະຕິອັດໃຫ້ແກ່ພະນັກງານ, ສະມາຊິກພັກ, ມະຫາຊົນ, ສຶມທຶບທັງແນວຄິດ, ຄຸນສົມບັດສິນທໍາ ປະຕິບັດ ແລະ ກົດໝາຍ ຢ່າງແໜ້ນແຟ້ນ ເພື່ອຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ. ສະນັ້ນ, “ຄວນມີການໂຄສະນາ ແລະ ຕິດຕາມກວດ ກາ, ສຶກສາອົບຮົມກົດໝາຍແຕ່ເທິງລົງລຸ່ມ, ແຕ່ລຸ່ມຂຶ້ນເທິງ” (ໂຮ່ຈິມິນ, 2018, ໜ້າ 145). ດ້ວຍການໂຄສະນາສຶກສາອົບຮົມເຜີຍແຜ່ກົດໝາຍ ຕ້ອງມີຫຼາຍຮູບການ, ຫຼາຍວິທີທີ່ອຸດົມສົມບູນ ແນໃສ່ເຮັດໃຫ້ບັນດາກົດໝາຍທີ່ລັດປະກາດໃຊ້ ໄດ້ຮັບການໂຄສະນາເຜີຍ ແຜ່ຢ່າງກວ້າງຂວາງ ແລະ ຕໍ່ເນື່ອງເຊັ່ນ:

1). ຈັດຕັ້ງການໂຄສະນາສຶກສາອົບຮົມໂດຍກົງ ເພື່ອຈັດຕັ້ງເຜີຍແຜ່ສຶກສາອົບຮົມກົດໝາຍ ໃຫ້ແຕ່ລະກຸ່ມເປົ້າໝາຍໂດຍກົງ ດ້ວຍການບັນລະຍາຍຂອງວິທະຍາກອນ ທີ່ໄດ້ຮັບການແຕ່ງຕັ້ງມອບໝາຍຈາກການຈັດຕັ້ງທີ່ກ່ຽວຂ້ອງ, ເປົ້າໝາຍເຂົ້າຮ່ວມອົບຮົມ ອາດຈະແມ່ນພະນັກງານ-ລັດຖະກອນຂອງລັດ ຢູ່ຕາມສໍານັກງານອົງການຕ່າງໆ, ປະຊາຊົນຢູ່ຕາມຮາກຖານບ້ານເຂດຫ່າງໄກສອກຫຼີກ, ກຸ່ມບ້ານ , ນັກຮຽນນັກສຶກສາ ຢູ່ຕາມໂຮງຮຽນ, ສະຖາບັນການສຶກສາຕ່າງໆ, ທະຫານ, ຕໍາຫຼວດ ຢູ່ຕາມກົມກອງກໍາລັງປະກອບອາວຸດ, ນັກທຸລະກິດ-ຜູ້ປະກອບການ ຢູ່ຕາມຫ້ວໜ່ວຍທຸລະກິດຕ່າງໆ; ໃນການໂຄສະນະສຶກສາອົບຮົມ ຕ້ອງອະທິບາຍຈະແຈ້ງໃຫ້ປະຊາຊົນເຂົ້າໃຈວ່າ ຍ້ອນຫຍັງຕ້ອງໄດ້ເຄົາລົບ ແລະ ປະຕິບັດບັດກົດໝາຍໃຫ້ຖືກຕ້ອງ ແລະ ອະທິບາຍໃຫ້ຈະແຈ້ງວ່າ: ວຽກງານດັ່ງກ່າວ ມີຄວາມຈໍາເປັນທີ່ຕ້ອງໄດ້ເຄົາລົບ ແລະ ປະຕິບັດກົດໝາຍ ໂດຍພະນັກງານທີ່ລົງໄປໂຄສະນາ, ສຶກສາອົບຮົມກົດໝາຍຢູ່ສະຖານທີ່ຕ່າງໆ ຕ້ອງມີຄວາມອົດທົນ, ດຸໝັ່ນພາກພຽນ ບໍ່ຄວນລົງໄປແລ້ວຈະຫາແຕ່ຜົນປະໂຫຍດພຽງຢ່າງດຽວ; ໃນການອະທິບາຍນັ້ນ ຕ້ອງຈະແຈ້ງ, ແທດເໝາະກັບຕົວຈິງ, ມີກົກປາຍສາເຫດ ແລະ ໃຫ້ທຸກຄົນເຂົ້າໃຈ ພ້ອມທັງຈື່ຈໍາໄດ້ງ່າຍ.

2). ໂຄສະນາເຜີຍແຜ່ກົດໝາຍ ໂດຍຜ່ານພາຫະນະສື່ມວນຊົນ ຕ້ອງອະທິບາຍກົດໝາຍທາງວິທະຍຸ, ໂທລະພາບ, ສື່ສິ່ງພິມຕ່າງໆ ລວມທັງສື່ເອເລັກໂຕຣນິກຕ່າງໆ ເພື່ອໃຫ້ຜູ້ບໍລິໂພກສື່ຕ່າງໆເຫຼົ່ານັ້ນ ມີຄວາມຮັບຮູ້ເຂົ້າໃຈກົດໝາຍ, ລະບຽບການໃນແຕ່ລະໄລຍະ, ໂດຍການຄັດຈ້ອນ, ເລືອກເຟັ້ນເອົາເນື້ອໃນທີ່ສໍາຄັນຂອງກົດໝາຍ ອອກເຜີຍແຜ່ຜ່ານສື່ ໃຫ້ແທດເໝາະກັບຈຸດພິເສດຂອງແຕ່ລະສື່ ແລະອະທິບາຍໃຫ້ຈະແຈ້ງ, ເວົ້າແນວໃດ ໃຫ້ທຸກຄົນເຂົ້າໃຈງ່າຍ ແລະ ຈື່ໄດ້ດີ.

3). ໂຄສະນາອົບຮົມສ້າງສະຕິເຄົາລົບກົດໝາຍຢູ່ໃນລະບົບໂຮງ ຮຽນ, ສິ່ງທີ່ສໍາຄັນແມ່ນການສ້າງໃຫ້ເປັນໂຄງການຫຼັກສູດການຮຽນ-ການສອນທາງດ້ານກົດໝາຍຢູ່ແຕ່ລະຊັ້ນຮຽນ, ການບໍາລຸງຍົກລະດັບການສິດສອນໃຫ້ແກ່ຄູ-ອາຈານ ຢູ່ແຕ່ລະຊັ້ນຮຽນໃຫ້ເປັນປົກກະຕິ ໂດຍສະເພາະໂຄສະນະຂໍ້ມູນ-ຂ່າວສານທາງດ້ານກົດໝາຍ ເປັນຕົ້ນແມ່ນກົດໝາຍວ່າດ້ວຍການປົກປ້ອງສິດ ແລະຜົນປະໂຫຍດຂອງເດັກ, ກົດໝາຍວ່າດ້ວຍຢາເສບຕິດ, ກົດໝາຍວ່າດ້ວຍການຈະລາຈອນທາງບົກ ແລະ ກົດໝາຍວ່າດ້ວຍການດໍາເນີນຄະດີເດັກ...

4). ສ້າງຕູ້ກົດໝາຍຂອງບ້ານ ເພື່ອໃຫ້ອໍານາດການປົກຄອງ ແລະ ປະຊາຊົນຢູ່ຮາກຖານບ້ານ ໄດ້ອ່ານ ແລະ ເຂົ້າໃຈກົດໝາຍທີ່ພົວພັນເຖິງແຕ່ລະບັນຫາທີ່ເຂົາເຈົ້າສົນໃຈ ໂດຍສະເພາະໂຄສະນະສຶກສາອົບຮົມກົດໝາຍ ໃຫ້ແກ່ຜູ້ທີ່ລະເມີດກົດໝາຍຢູ່ຂັ້ນບ້ານ ເປັນຕົ້ນແມ່ນ: ປະມວນກົດໝາຍອາຍາ, ປະມວນກົດໝາຍແພ່ງ, ກົດໝາຍວ່າດ້ວຍຢາເສບຕິດ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງ ເພື່ອແນໃສ່ເຮັດໃຫ້ບັນດາກົດໝາຍທີ່ລັດປະກາດໃຊ້ ໄດ້ຮັບການໂຄສະນາເຜີຍແຜ່ຢ່າງກວ້າງຂວາງ ແລະ ຕໍ່ເນື່ອງສາມາດລົງທ້ອງຖິ່ນຕ່າງໆຢ່າງວ່ອງໄວ

ທັນເວລາ, ຖືກຕ້ອງກັບສະພາບການຄວາມເປັນຕົວຈິງໃນແຕ່ລະໄລຍະ.

3. ເສີມຂະຫຍາຍແນວຄິດ ກ່ຽວກັບການນຳໃຊ້ກົດໝາຍໃຫ້ມີຄວາມໂປ່ງໃສ, ເອກະພາບ ແລະ ຍຸຕິທຳ.

ອົງການຂອງລັດ ຕ້ອງເພີ່ມທະວີການນຳໃຊ້ກົດໝາຍຢູ່ໃນສັງຄົມ ໄປຕາມກົດໝາຍທີ່ກຳນົດໄວ້ ເພື່ອຍົກສູງຄວາມຮັບຜິດຊອບ ແລະ ຈັດຕັ້ງການນຳໃຊ້ກົດໝາຍໃຫ້ປາກົດຜົນເປັນຈິງ, ປະກອບສ່ວນໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ມີຄວາມຖືກຕ້ອງ, ເຂັ້ມແຂງ, ມີປະສິດທິພາບ, ປະສິດທິຜົນ; ປະຕິບັດມາດຕະການສະກັດກັ້ນ ແລະ ແກ້ໄຂການລະເມີດກົດໝາຍ ຕາມຂະບວນການຍຸຕິທຳ, ສ້າງຄວາມໄວ້ເນື້ອເຊື່ອໃຈໃຫ້ກັບປະຊາຊົນ.ເພື່ອເຮັດໃຫ້ການນຳໃຊ້ກົດໝາຍ ມີຄວາມເຂັ້ມງວດຄວນໄດ້ເອົາ ໃຈໃສ່ ດັ່ງນີ້:

1). ເພີ່ມທະວີຫຼັກການນິຕິທຳ. ອົງການອຳນາດລັດທຸກຂັ້ນ ຕ້ອງຍົກສູງຄວາມຮັບຜິດຊອບ ໃນການນຳໃຊ້ກົດໝາຍຢ່າງເຂັ້ມງວດ, ໃຫ້ກາຍເປັນຄວາມຊິນເຄີຍໃນການໃຊ້ຊີວິດປະຈຳວັນ. ຕ້ອງເດັດດ່ຽວແກ້ໄຂແນວຄິດຖືເບົາຕໍ່ກົດໝາຍ ເຮັດໃຫ້ການບໍລິຫານລັດດ້ວຍກົດໝາຍ ມີຄວາມໂປ່ງໃສ, ໂລ່ງລ່ຽນ ແລະ ມີປະສິດທິພາບສູງຂຶ້ນ, ມີຄວາມໂປ່ງໃສໃນການບໍລິການຮັບໃຊ້ປະຊາຊົນ; ພົນລະເມືອງທຸກຄົນ ຕ້ອງມີຄວາມສະເໝີພາບຕໍ່ໜ້າກົດໝາຍ, ມີສະຕິເປັນເຈົ້າການນຳໃຊ້ກົດໝາຍໃຫ້ສູງຂຶ້ນ.

2). ຍົກລະດັບຄວາມຮັບຮູ້ ແລະ ມີສະຕິຕື່ນຕົວຕໍ່ລັດຖະທຳມະນູນ ແລະ ກົດໝາຍ, ຮັບປະກັນສ້າງຄວາມໝັ້ນຄົງໃຫ້ແກ່ລັດ ປະຊາທິປະໄຕປະຊາຊົນ ທີ່ປົກຄອງດ້ວຍກົດໝາຍ, ຮັບປະກັນໃຫ້ປະຊາຊົນບັນດາເຜົ່າ ມີຄວາມສະເໝີພາບຕໍ່ໜ້າກົດໝາຍ ແລະ ມີຄວາມຍຸຕິທຳໃນສັງຄົມ ໂດຍແມ່ນບັນດາອົງການຈັດຕັ້ງລັດທຸກຂັ້ນ ທຸກພາກສ່ວນ ທີ່ມີສິດອຳນາດໃນການປະຕິບັດກົດໝາຍ ເຊັ່ນ: ອົງການສຶບສວນ-ສອບສວນ, ອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະ ອົງການປະຕິບັດຄຳຕັດສິນຂອງສານ ໃຫ້ປະຕິບັດສິດ ແລະ ໜ້າທີ່ຂອງຕົນຕາມກົດໝາຍກຳນົດຢ່າງເຂັ້ມງວດ.

3). ອົງການປົກປ້ອງກົດໝາຍ ຄວນເປັນເຈົ້າການໃນການດຳເນີນການແກ້ໄຂຄະດີຕ່າງໆໃຫ້ຖືກຕ້ອງ, ຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ, ມີຄຸນນະພາບໃຫ້ສູງຂຶ້ນ, ຮັດກຸມ ແລະ ທັນເວລາ, ແກ້ໄຂຢ່າງເຂັ້ມງວດ ແລະ ເດັດຂາດຕໍ່ຜູ້ທີ່ລະເມີດກົດໝາຍ ພ້ອມທັງຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດໃຫ້ສຳເລັດເພື່ອຮັບປະກັນໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ມີຄວາມສະຫງົບສຸກ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງປະຊາຊົນບັນ ດາເຜົ່າ. ຜູ້ທີ່ລະເມີດກົດໝາຍ ຕ້ອງຖືກລົງໂທດຢ່າງເຂັ້ມງວດ, ບໍ່ອະນຸຍາດໃຫ້ບຸກຄົນໃດຢູ່ເໜືອກົດໝາຍ, ໃຫ້ສົມກັບຄຳເວົ້າຂອງປະທານ ໂຮ່ຈິມິນ ໄດ້ເວົ້າວ່າ: "ກົດໝາຍຕ້ອງລົງໂທດຕໍ່ພວກບໍ່ຊື່ສັດໂດຍກົງ, ບໍ່ວ່າຜູ້ນັ້ນຈະຢູ່ໃນຖານະໃດ, ເຮັດອາຊີບຫຍັງກໍຕາມ" (ໂຮ່ຈິມິນ, 2018, ໜ້າ 146). ກໍລະນີ "ຜິດກົດໝາຍ-ຊົ່ງມີຫຼັກຖານພະ ຍານຈະແຈ້ງ ກໍ່ຕ້ອງໄດ້ຮັບໂທດນັ້ນຢ່າງແນ່ນອນ, ບໍ່ມີໃຜຈະຕິໄດ້" (ໂຮ່ຈິມິນ, 2018, ໜ້າ 76) ນັ້ນກໍເພື່ອຮັບປະກັນໃຫ້ສັງຄົມມີຄວາມສະເໝີພາບ, ຍຸຕິທຳ, ສະຫງົບປອດໄພ ແລະ ເປັນລະບຽບຮຽບຮ້ອຍ.

4). ຍົກສູງບົດບາດເປັນແບບຢ່າງນຳໜ້າ ຂອງພະນັກງານ-ລັດຖະກອນ, ສະມາຊິກພັກ ໂດຍສະເພາະພະນັກງານນຳພາ-ຄຸ້ມຄອງໃຫ້ໄປຕາມທິດຊີ້ນຳທີ່ວ່າ: ພັກ ຍາມໃດກໍ່ຕ້ອງເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍຂອງລັດ ພ້ອມທັງນຳໃຊ້ກົດໝາຍຢ່າງຖືກຕ້ອງ, ເດັດດ່ຽວໃນການສະກັດກັ້ນ, ແກ້ໄຂປາກົດການຫຍໍ້ທໍ້ຕ່າງໆໃນຖັນແຖວພະນັກງານ ແລະ ສະມາຊິກພັກ.

4. ເສີມຂະຫຍາຍແນວຄິດກ່ຽວກັບການຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ໃຫ້ມີຄວາມຖືກຕ້ອງ ແລະ ເຂັ້ມງວດ.

ການເຊື່ອມຊຶມ, ກຳແໜ້ນແນວທາງນະໂຍບາຍ ຂອງພັກ ກ່ຽວກັບວຽກງານຕິດຕາມ, ກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ແມ່ນແນໃສ່ເຊີດຊູສິດເປັນເຈົ້າຂອງປະເທດຊາດ ຂອງປະຊາຊົນບັນດາເຜົ່າ, ຜົນປະໂຫຍດຂອງຊາດ. ເພື່ອຮັບປະກັນໃຫ້ລັດຖະທຳມະນູນ ແລະ ກົດໝາຍ ໄດ້ເຂົ້າເຖິງປະຊາຊົນຢ່າງເປັນຮູບປະທຳ, ປົກປ້ອງສິດ ແລະ ຜົນປະໂຫຍດຕົວຈິງຢູ່ໃນສັງຄົມຄື:

1). ເພີ່ມທະວີການຕິດຕາມ, ກວດກາການປະຕິບັດກົດໝາຍ ຕິດພັນກັບການຍົກສູງສະຕິເຄົາລົບກົດໝາຍ ແລະ ຄວາມເປັນເຈົ້າການຂອງປະຊາຊົນ ໃນການປະກອບສ່ວນຕິດຕາມ, ປະກອບຄຳເຫັນ, ສະໜອງຂໍ້ມູນຕໍ່ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ. ອົງການຈັດຕັ້ງລັດທຸກຂັ້ນ ແລະ ລັດຖະກອນຕ້ອງເຄົາລົບສິດເປັນເຈົ້າ, ສິດເສລີພາບ, ຮັບຟັງຄຳເຫັນ, ຂໍ້ສະເໜີຂອງປະຊາຊົນ ແລະ ພິຈາລະນາແກ້ໄຂຢ່າງພາວະວິໄສ, ເລິກເຊິ່ງ, ທັນການ, ຮັບປະກັນການບໍລິການຮັບໃຊ້ປະຊາຊົນ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ສະຫງົບປອດໄພ.

2). ສ້າງສະຕິເຄົາລົບກົດໝາຍ ຕ້ອງໄດ້ຕື່ນຕົວປະຕິບັດສິດ ແລະ ພັນທະພົນລະເມືອງ, ມີຈັນຍາບັນ ແລະ ຄວາມຮັບຜິດຊອບໃນ

ການປະຕິບັດໜ້າທີ່ ຂອງພະນັກງານ-ສະມາຊິກພັກ; ສ້າງເງື່ອນໄຂ ຕົວຈິງ ແລະ ອຳນວຍຄວາມສະດວກໃຫ້ປະຊາຊົນ ສາມາດເຂົ້າເຖິງ ຂະບວນການຍຸຕິທຳ ກໍ່ຄືໃຊ້ການບໍລິການທາງດ້ານກົດໝາຍ ຈາກ ລັດ ຫຼື ສັງຄົມ ເພື່ອປົກປ້ອງຄວາມເປັນທຳໃຫ້ຕົນເອງ ກໍ່ຄືສິດຜົນ ປະໂຫຍດຂອງລັດ, ຂອງລວມໝູ່ ແລະ ຂອງປະຊາຊົນ.

3). ຕ້ອງເຊີດຊູນ້ຳໃຈຮັກຊາດ, ຮັກລະບອບໃໝ່, ສ້າງແບບ ແຜນດຳລົງຊີວິດປອດໃສຂາວສະອາດ, ຕ້ານແນວຄິດໂລບມາກໂລ ພາ, ເຫັນແກ່ຜົນປະໂຫຍດ, ຕ້ານແນວຄິດເຫັນແກ່ເງິນ-ຄຳ ກ້າວໄປ ເຖິງການຮັບສິນບົນ, ເກີດມີປາກົດການສໍ້ລາດບັງຫຼວງ ອັນພາໃຫ້ ສັງຄົມ ບໍ່ມີຄວາມສະຫງົບສຸກ ແລະ ຍຸຕິທຳ “ຕ້ອງສຶກສາອົບຮົມ ໃຫ້ພະນັກງານ, ປະຊາຊົນ, ນັກຮົບ ຄຽດຊັງຕໍ່ໄພສໍ້ລາດບັງຫຼວງ, ຟຸມເຟືອຍ, ພະຍາດອາດຍາສິດ. ສຳລັບຢູ່ບ່ອນໃດ, ຂະແໜງການ ໃດ ທີ່ມີພະຍາດດັ່ງກ່າວຮ້າຍແຮງເປັນພິເສດ, ລັດຖະບານ, ອົງ ການຈັດຕັ້ງມະຫາຊົນ ຈະມີຄຳສັ່ງຊ່ວຍໃຫ້ບ່ອນນັ້ນ, ຂະແໜງການ ນັ້ນບຸກໂຈມຕີກ່ອນໝູ່” (ໂຮ່ຈີມິນ, 2019, ໜ້າ 399). ຕ້ອງໄດ້ ເອົາໃຈໃສ່ຕໍ່ການອາງມາດຕະການຢ່າງເດັດຂາດ ຕໍ່ພະນັກງານລັດທີ່ ສວຍໃຊ້ຖານະຕຳແໜ່ງຢ່າງເຂັ້ມງວດ ຕໍ່ການປະຕິບັດວິໄນກັບ ພະນັກງານທຸກຂັ້ນ, ເດັດຂາດຕໍ່ພະນັກງານຂັ້ນສູງທີ່ບໍ່ເປັນແບບຢ່າງ, ເພີ່ມທະວີການກວດກາພະນັກງານທຸກຂັ້ນ, ທຸກປະເພດ ນັບທັງ ພະນັກງານບຳນານ ແລະ ພະນັກງານທີ່ພວມດຳລົງຕຳແໜ່ງ.

ສັງລວມແລ້ວ, ແນວຄິດກ່ຽວກັບກົດໝາຍໃນນິພົນ ໂຮ່ຈີ ມິນ ແມ່ນເຄື່ອງມືໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມເພື່ອເປັນບົດຮຽນ ໃນການໝູນໃຊ້ເຂົ້າໃນການຮຽນ-ການ ສອນ ຢູ່ສະຖາບັນການເມືອງ ແລະການປົກຄອງແຫ່ງຊາດ; ໃນນັ້ນ ກົດໝາຍໄດ້ກຳນົດການປະພຶດທີ່ແຕກຕ່າງກັນ ໂດຍຜ່ານຄວາມຄິດ ຂອງຄົນຊຶ່ງມັນບັນຊາທິດທາງຂະບວນວິວັດການປະພຶດທັງໝົດ, ການກຳນົດເປົ້າໝາຍ, ການດັດປັບ ແລະ ກວດກາການປະພຶດຂອງ ຄົນ, ສາ ມາດເວົ້າໄດ້ວ່າ: ກົດໝາຍແມ່ນໃຊ້ໄວ້ເພື່ອດັດປັບສາຍ ພົວພັນທາງສັງຄົມ. ໃນນັ້ນ ໃນການສ້າງ ແລະ ປັບປຸງກົດໝາຍຜ່ານ ຫຼັກການທີ່ໄດ້ກຳນົດໄວ້ໃນກົດໝາຍແລ້ວ; ລັດຕ້ອງໄດ້ປະກາດໃຊ້ ບັນດາຂໍ້ກຳນົດຂອງກົດໝາຍຕ່າງໆ ໂດຍຜ່ານການໂຄສະນາ, ສຶກສາ ອົບຮົມເຜີຍແຜ່ກົດໝາຍ, ການນຳໃຊ້ກົດໝາຍ ແລະ ຕິດຕາມ, ກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ເຂົ້າໃນການຈັດຕັ້ງ ສັງຄົມ ແລະ ໃຊ້ສິດອຳນາດບັງຄັບການກະທຳທີ່ລະເມີດກົດໝາຍ ຈົນກ້າວໄປເຖິງຂັ້ນຕອນຂະບວນການຍຸຕິທຳ, ຈຶ່ງເຮັດໃຫ້ຄຸນຄ່າ ຂອງກົດໝາຍເພີ່ມຂຶ້ນແລະ ສັກສິດ. ພ້ອມທັງເປັນບັນທັດຖານ ເພື່ອວັດແທກການປະພຶດຂອງຄົນ, ເປັນເຄື່ອງມືພິສູດການເຄື່ອນໄຫວ ຂອງຄົນໃນສັງຄົມ, ເປັນເຄື່ອງມືດັດປັບສາຍພົວພັນໃນສັງຄົມ ແລະ ໃຫ້ທຸກຄົນຮັບຮູ້ຄຸນຄ່າແລະ ປັດໄຈຂອງກົດໝາຍຢ່າງຊັດເຈນ ເພື່ອ ຮັບປະກັນຄວາມສັກສິດຂອງດ້ານກົດໝາຍ ເຮັດໃຫ້ສັງຄົມມີຄວາມ ສະຫງົບສຸກ, ຄວາມສີວິໄລ ແລະ ຍຸຕິທຳ.

ເອກະສານອ້າງອີງ

ໂຮ່ຈີມິນ. (2010). *ນິພົນເລືອກເຟັ້ນ ເຫຼັ້ມ I*. ສຳນັກພິມຈຳໜ່າຍ ການເມືອງແຫ່ງຊາດ ຮ່າໂນ້ຍ.

ໂຮ່ຈີມິນ. (2011). *ນິພົນເລືອກເຟັ້ນ ເຫຼັ້ມ II*. ສຳນັກພິມຈຳໜ່າຍ ການເມືອງແຫ່ງຊາດ ຮ່າໂນ້ຍ.

ໂຮ່ຈີມິນ. (2011). *ນິພົນເລືອກເຟັ້ນ ເຫຼັ້ມ III*. ສຳນັກພິມຈຳໜ່າຍ ການເມືອງແຫ່ງຊາດ ຮ່າໂນ້ຍ.

ໂຮ່ຈີມິນ. (2017). *ນິພົນຄົບຊຸດ ເຫຼັ້ມ I*. ສຳນັກພິມຈຳໜ່າຍ ການເມືອງແຫ່ງຊາດ ຮ່າໂນ້ຍ.

ໂຮ່ຈີມິນ. (2018). *ນິພົນຄົບຊຸດ ເຫຼັ້ມ II*. ສຳນັກພິມຈຳໜ່າຍ ການເມືອງແຫ່ງຊາດ ຊື້ເທິດ.

ໂຮ່ຈີມິນ. (2018). *ນິພົນຄົບຊຸດ ເຫຼັ້ມ IV*. ສຳນັກພິມຈຳໜ່າຍ ການເມືອງແຫ່ງຊາດ ຊື້ເທິດ.

ໂຮ່ຈີມິນ. (2018). *ນິພົນຄົບຊຸດເຫຼັ້ມ V*.ສຳນັກພິມຈຳໜ່າຍ ການເມືອງແຫ່ງຊາດ ຊື້ເທິດ.

ໂຮ່ຈີມິນ. (2018). *ນິພົນຄົບຊຸດ ເຫຼັ້ມ VI*. ສຳນັກພິມຈຳໜ່າຍ ການເມືອງແຫ່ງຊາດ ຊື້ເທິດ.

ໂຮ່ຈີມິນ. (2019). *ນິພົນຄົບຊຸດ ເຫຼັ້ມ VII*. ສຳນັກພິມຈຳໜ່າຍ ການເມືອງແຫ່ງຊາດ ຊື້ເທິດ.

ໂຮ່ຈີມິນ. (2019). *ນິພົນຄົບຊຸດ ເຫຼັ້ມ IX*. ສຳນັກພິມຈຳໜ່າຍ ການເມືອງແຫ່ງຊາດ ຊື້ເທິດ.

ໂຮ່ຈີມິນ. (2019). *ນິພົນຄົບຊຸດ ເຫຼັ້ມ XII*. ສຳນັກພິມຈຳໜ່າຍ ການເມືອງແຫ່ງຊາດ ຊື້ເທິດ.